*Souphanouvong University Journal of Multidisciplinary Research and Development*
**2024,Vol. 8, No. 2, 142-148**
**https://doi.org/10.69692/SUJMRD0802142**

# Student`s Understanding toward Rural Development Development after Learning from Local Visit by the Faculty of Education Souphanouvong University; During Academic Year of 2018 - 2020

Saiphone KHOTSAIGNOH*, Phetsamone SOULIVONG, Khanty SAYTHALA, Khamphy SIRIRATH, Houmpheng OUDOMSITH, Yearher LIAMAHER and Chanpheng VONGVILAY
*Division of Scientific research and Academic service, Faculty of Education Souphanouvong University*

***Correspondence:**

*Saiphone KHOTSAIGNOH*

*Division of Scientific research and Academic service, Faculty of Education Souphanouvong University.*
***Tel**: +85620 29335574*
*E-mail: saiphone@su.edu.la*

*Article Info:*
*Submitted: Apr 25, 2022*
*Revised: Jun 11, 2022*
*Accepted: Jun 27, 2022*

**Abstract**

This research aimed to investigate the students' understanding toward rural development after learning from local visit at rural areas by Faculty of Education Souphanouvong University, which is a subject that belongs to the political science curriculum of Faculty of Education, Souphanouvong University. The research was to gain insights regarding the understanding level by using the pretest and posttest to assess their learning progress, then compared means of those scores with the variable of their residence origins, The sampling students focused on 58 students (27 Women students included) of political science department, the instrument of this research was an objective test with multiple choice with IOC = 1.00 and difficulty level ranged between 0.40-0.86; and the reliability was of 0.84; there are two steps of assessment including of before and after local visiting with the same questionnaire

The research findings revealed that 1). The students` understand about rural development policy after local visit was significant higher with the compared mean of posttest remark after local visit was significant different Sig .05, and 2). The students` understand about rural development policy after local visit compared to residence origins were not significant different.

**Keywords:** *Learning from Local visits, residence origins*

## 1. ພາກສະເໜີ

"ຖືເອົາການພັດທະນາຊັບພະຍາກອນມະນຸດມະນຸດເປັນປັດໄຈຕັດສິນການພັດທະນາປະເທດຊາດໃນໄລຍະໃໝ່, ຄຸ້ມຄອງ ແລະ ພັດທະນາສັງຄົມຢ່າງປະດິດສ້າງ ເພື່ອສ້າງສັງຄົມຍຸຕິທຳ ແລະ ສີວິໄລ. ໃນນັ້ນຖືຄົນເປັນເປົ້າໝາຍ ແລະ ຈຸດສຸມຂອງການພັດທະນາ ສືບຕໍ່ເສີມຂະຫຍາຍຜົນສຳເລັດຂອງການປະຕິຮູບການສຶກສາ ກໍ່ຄືການພັດທະນາຊັບພະຍາກອນມະນຸດຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາແຫ່ງຊາດໃຫ້ມີຄຸນນະພາບມາດຕະຖານຂອງພາກພື້ນ, ສາກົນ ແລະ ທັນສະໄໝ; ສືບຕໍ່ສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄວາມຮັບຜິດຊອບຕໍ່ສັງຄົມ, ຕໍ່ພັນທະພົນລະເມືອງ, ມີສະຕິເຄົາລົບກົດໝາຍ, ຮັກອັນດີອັນຖືກຕ້ອງ ພ້ອມກັນນັ້ນ ກໍ່ເດັດດ່ຽວຕ້ານອັນຫຍໍ້ທໍ້, ຫຼ້າຫຼັງ ແລະ ທັດສະນະຜິດເຂວຕ່າງໆ ຕ້ານການເຊື່ອມຖອຍດ້ານແນວຄິດຄຸນສົມບັດ" (ຄະນະໂຄສະນາອົບຮົມສູນກາງພັກ, 2016).

ວິຊາພັດທະນາຊຸມຊົນ ແລະ ຊົນນະບົດ ເປັນວິຊາໜຶ່ງໃນໝວດວິຊາຄວາມຮູ້ພື້ນຖານວິຊາສະເພາະຂອງຫຼັກສູດປະລິນຍາຕີສຶກສາສາດ ສາຂາຄູວິທະຍາສາດການເມືອງ ເຊິ່ງເປັນວິຊາທີ່ມີຄວາມສຳຄັນໃນການເຜີຍແຜ່

ຜັນຂະຫຍາຍແນວທາງນະໂຍບາຍ ແລະ ບັນດາແຜນຍຸດທະສາດການພັດທະນາຊົນນະບົດຂອງພັກ-ລັດເຮົາ ໂດຍໄດ້ມີການສຶກສາເຖິງ "ຄວາມໝາຍ ແລະ ຫຼັກການຂອງການພັດທະນາຊົນນະບົດ, ການມີສ່ວນຮ່ວມຂອງຊຸມຊົນ, ຫຼັກການເພິ່ງຕົນເອງຂອງຊຸມຊົນ, ຄວາມເຂົ້າໃຈກ່ຽວກັບຕົວເມືອງ ແລະ ຊົນນະບົດ, ການບໍລິຫານວຽກງານຊົນນະບົດ, ການວາງແຜນ ແລະ ການສ້າງບ້ານເປັນຫົວໜ່ວຍພັດທະນາ, ການສຶກສາສາກົນການພັດທະນາ". (ສູນພັດທະນາຄູ ແລະ ກົມສ້າງຄູ, 2019)

ໃນຄວາມເປັນຈິງແລ້ວ, ການຈັດການຮຽນ-ການສອນຂອງຄູ ແມ່ນມີຫຼາຍຮູບແບບ ແລະ ຫຼາຍວິທີ ທີ່ມີຄວາມສະເພາະ ແລະ ເໝາະສົມໃນແຕ່ລະສະພາບແວດລ້ອມທີ່ແຕກຕ່າງກັນ ແຕ່ເຖິງຢ່າງໃດກໍ່ຕາມເປົ້າໝາຍຂອງບັນດາເຕັກນິກວິທີການເຫຼົ່ານັ້ນ ກໍ່ແມ່ນສິ່ງດຽວກັນຄື: ການສ້າງໃຫ້ຜູ້ຮຽນເກີດປະສົບການຮຽນຮູ້ດ້ວຍຕົນເອງໃຫ້ຫຼາຍທີ່ສຸດເທົ່າທີ່ຈະຫຼາຍໄດ້ ເຊິ່ງປັດໄຈສຳຄັນທີ່ເອື້ອຕໍ່ການເກີດປະສົບການເຫຼົ່ານັ້ນກໍ່ຄື ການໄດ້ສຳພັດກັບເຫດການ ແລະ ປະສົບການຈິງທີ່ກ່ຽວຂ້ອງເນື້ອໃນບົດຮຽນທີ່ເຂົາເຈົ້າພວມຮຽນໃນຫ້ອງຮຽນ. ຫຼັກການນີ້ກໍ່ເລີ່ມມາຈາກຫຼັກມູນການສຶກສາຂອງພັກເຮົາທີ່ວ່າ: ຮຽນຕ້ອງໄປຄຽງຄູ່ກັບການເຮັດ, ການສຶກສາຕ້ອງປະສານສົມທົບກັບການອອກແຮງງານຜະລິດ, ໂຮງຮຽນຕ້ອງຕິດພັນສັງຄົມສະນັ້ນ, ການສອນ ແລະ ການຮຽນວິຊາສຶກສາພົນລະເມືອງ ຕ້ອງແນ່ໃສ່ກຳໄດ້ຢ່າງຊັດເຈນ, ເໜັ້ນໜັກບັນດາຄວາມຮູ້ວິທະຍາສາດດັ່ງກ່າວເພື່ອຈະແກ້ໄຂອະທິບາຍບັນດາບັນຫາດັ່ງກ່າວທີ່ຈະປະເຊີນໜ້າກັບເຫດການຕົວຈິງຂອງສັງຄົມ.

ການປະຕິບັດຫຼັກການຮັບປະກັນລັກສະນະພຶດຕິກຳບໍ່ຈຳກັດພຽງແຕ່ຢູ່ໃນຂອດການສອນ, ອະທິບາຍທີ່ຢູ່ໃນບົດຕົວຢ່າງ, ບົດເລົ່າເລື່ອງຂອງຄູຢູ່ໃນຫ້ອງຮຽນເທົ່ານັ້ນ ແຕ່ຍັງໄດ້ປະຕິບັດຢູ່ໃນບັນດາຂອດຮູບການຈັດຕັ້ງການສອນ-ການຮຽນຄື: ຢູ່ໃນການສົນທະນາ, ການສຳມະນາ,ໄປທັດສະນະສຶກສາ,ໄປຄົ້ນຄວ້າຊອກຮູ້ຕົວຈິງຢູ່ໃນສັງຄົມ. ການເຄື່ອນໄຫວຕົວຈິງທັງໝົດນັ້ນ ແມ່ນແນ່ໃສ່ເຮັດໃຫ້ນັກຮຽນກຳໄດ້ ຄວາມຮູ້ວິທະຍາສາດຢ່າງຖືກຕ້ອງ ແລະ ເປັນການຝຶກຝົນຫຼໍ່ຫຼອມທັດສະນະ, ຄຸນສົມບັດໃຫ້ນັກຮຽນອີກດ້ວຍ (ຄະນະສຶກສາສາດ, 2018).

ຍ້ອນເຫັນໄດ້ຄວາມສຳຄັນຂອງການສ້າງປະສົບການຈິງໃຫ້ກັບຜູ້ຮຽນ ດັ່ງທີ່ກ່າວມາຂ້າງເທິງນັ້ນ ໃນນາມທີ່ເປັນຄູສອນ ວິຊາການພັດທະນາຊຸມຊົນ ແລະ ຊົນນະບົດ ຈຶ່ງໄດ້ເກີດມີຄວາມມຸ່ງຫວັງໃນການຈັດການຮຽນຮູ້ໃນລາຍວິຊາຂອງຕົນເອງ ເພື່ອໃຫ້ນັກສຶກສາເກີດປະສົບການຮຽນຮູ້ທີ່ພຽບພ້ອມທັງທິດສະດີ ແລະ ພຶດຕິກຳຕົວຈິງ ໂດຍໄດ້ມີການສົມທົບກັບທາງອຳນາດການປົກຄອງທ້ອງຖິ່ນ ເພື່ອຈັດຕັ້ງໃຫ້ມີຂະບວນການລົງຮາກຖານຮຽນຮູ້ກັບຊຸມຊົນ-ຊົນນະບົດ ຂອງນັກສຶກສາໃນແຕ່ລະປີ ແລະ ໄດ້ມີການເກັບກຳຮວບຮວມຂໍ້ມູນ ເພື່ອສຶກສາຫາຊ່ອງທາງໃນການປັບປຸງຮູບແບບການຈັດການຮຽນຮູ້ແກ່ນັກສຶກສາ ໃຫ້ມີຄວາມແທດເໝາະກັບສະພາບຕົວຈິງຂອງນັກສຶກສາ ແລະ ຊຸມຊົນ ໃນແຕ່ລະໄລຍະ ແລະ ທັງຮັບປະກັນທາງດ້ານເນື້ອໃນທາງວິຊາການ ອັນເປັນທີ່ມາຂອງການຄົ້ນຄ້ວາວິໄຈໃນຫົວຂໍ້ນີ້ "ຄວາມເຂົ້າໃຈຂອງນັກສຶກສາຕໍ່ກັບວຽກງານການພັດທະນາຊົນນະບົດ ພາຍຫຼັງການຈັດການຮຽນຮູ້ແບບລົງຮາກຖານຊຸມຊົນຂອງຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ" ໂດຍມີຈຸດປະສົງແມ່ນ ເພື່ອປຽບທຽບຄະແນນຜົນການທົດສອບຄວາມຮູ້ກ່ຽວກັບການພັດທະນາຊົນນະບົດ ກ່ອນ ແລະ ຫຼັງ ການລົງຊຸມຊົນຂອງນັກສຶກສາພ້ອມກັນນີ້ກໍ່ຍັງມີການປຽບທຽບຜົນຄະແນນທົດສອບຂອງກຸ່ມນັກສຶກສາທີ່ມາຈາກພູມລຳເນົາແຕກຕ່າງກັນນຳອີກ.

## 2. ອຸປະກອນ ແລະ ວິທີການ

### 2.1 ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າປະກອບມີ ແບບທົດສອບເພື່ອປະເມີນຄວາມເຂົ້າໃຈຂອງນັກສຶກສາຕໍ່ກັບວຽກງານການພັດທະນາຊົນນະບົດ ເຊິ່ງເປັນແບບປະລາໄນຈຳນວນ 20 ຂໍ້ ແບ່ງອອກເປັນ 2 ດ້ານຄື: ດ້ານຄວາມເຂົ້າໃຈທິດສະດີຂອງນະໂຍບາຍ ແລະ ດ້ານຄວາມເຂົ້າໃຈພຶດຕິກຳຈິງຂອງນະໂຍບາຍ ໂດຍສ້າງຂຶ້ນຈາກເນື້ອໃນບົດຮຽນພາກທິດສະດີ ໃນວິຊາການພັດທະນາຊຸມຊົນ ແລະ ຊົນນະບົດ ໂດຍມີການກວດສອບຄຸນນະພາບຂອງແບບສອບຖາມ ໂດຍມີຄ່າ OIC ( Index of item objective congruence) ທີ່ລະດັບ 1.00; ຄວາມຍາກງ່າຍລະຫວ່າງ 0.40-0.86 ແລະ ຄ່າຄວາມເຊື່ອໝັ້ນທັງສະບັບ (rxy) = 0.84

### 2.2 ວິທີດຳເນີນການຄົ້ນຄວ້າ

#### 2.2.1 ກຸ່ມເປົ້າໝາຍໃນການຄົ້ນຄວ້າ

ກຸ່ມເປົ້າໝາຍໃນການຄົ້ນຄວ້າ ແມ່ນເຈາະຈິງເອົາສະເພາະນັກສຶກສາຂອງຫຼັກສູດຄູວິທະຍາສາດການເມືອງ ໂດຍໄດ້ມີການເກັບກຳຂໍ້ມູນທັງໃນຫ້ອງຮຽນ ແລະ ລົງຊຸມຊົນຕົວຈິງ ເລີ່ມແຕ່ຣຸ່ນທີ 2 ໃນສົກສຶກສາ 2018-2019 ຈົນເຖິງນັກສຶກສາຣຸ່ນທີ່ 4 ໃນສົກສຶກສາ 2020-2021 ລວມ 3 ຣຸ່ນ ເຊິ່ງມີຈຳນວນນັກສຶກສາທັງໝົດ 58 ຄົນ, ຍິງ 27 ຄົນ. ເຊິ່ງສາເຫດທີ່ຈຳເປັນຕ້ອງເຈາະຈິງເອົານັກສຶກສາຈາກສາຂາຄູວິທະຍາສາດການເມືອງ ກໍ່ເນື່ອງຈາກວ່າ ເປັນພຽງສາຂາດຽວຂອງຄະນະສຶກສາສາດ ທີ່ມີການຈັດການຮຽນ-ການສອນວິຊາການພັດທະນາຊຸມຊົນ ແລະ ຊົນນະບົດ.

**2.2.2 ເນື້ອໃນການຄົ້ນຄວ້າ**

ການຄົ້ນຄວ້າຄັ້ງນີ້ ເປັນການສຶກສາຄວາມເຂົ້າໃຈຂອງນັກສຶກສາຕໍ່ກັບວຽກງານການພັດທະນາຊົນນະບົດ ພາຍຫຼັງການຈັດການຮຽນຮູ້ແບບລົງຮາກຖານຊຸມຊົນຂອງຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ ໂດຍການນຳເອົານັກສຶກສາລົງຮາກຖານຮຽນຮູ້ພຶດຕິກຳຕົວຈິງຮ່ວມກັບອຳນາດການປົກຄອງ ແລະ ປະຊາຊົນທ້ອງຖິ່ນ ໃນລາຍວິຊາພັດທະນາຊຸມຊົນ ແລະ ຊົນນະບົດ ເຊິ່ງເປັນວິຊາທີ່ສຳຄັນໃນໝວດວິຊາຄວາມຮູ້ວິຊາສະເພາະຂອງຫຼັກສູດຄູວິທະຍາສາດການເມືອງ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ. ໂດຍການປະຕິບັດຫຼັກສູດແລ້ວ ພາຍຫຼັງສຳເລັດການຮຽນພາກທິດສະດີຂອງວິຊານີ້ ແມ່ນຈະຕ້ອງໄດ້ນຳພານັກສຶກສາລົງຮາກຖານຮຽນຮູ້ກັບຊຸມຊົນທ້ອງຖິ່ນຕົວຈິງ ຢ່າງເປັນປົກກະຕິ

**2.2.3 ຕົວປ່ຽນທີ່ໃຊ້ໃນການສຶກສາ**

ຕົວປ່ຽນທີ່ໃຊ້ໃນການສຶກສາຄັ້ງນີ້ປະກອບມີ

❖ ຕົວປ່ຽນຕົ້ນ:
- ຄວາມເຂົ້າໃຈດ້ານທິດສະດີຂອງນະໂຍບາຍ
- ຄວາມເຂົ້າໃຈດ້ານພຶດຕິກຳຕົວຈິງຂອງນະໂຍບາຍ

❖ ຕົວປ່ຽນຕາມ:

ຜົນຄະແນນທົດສອບຄວາມເຂົ້າໃຈຕໍ່ກັບວຽກງານພັດທະນາຊົນນະບົດຂອງນັກສຶກສາ

**2.2.4 ແບບແຜນການຄົ້ນຄວ້າ**

ການຄົ້ນຄວ້າຄັ້ງນີ້ ເປັນການຄົ້ນຄວ້າຕາມແບບ Pretest-Posttest Design ໂດຍມີການທົດສອບກ່ອນ ແລະ ຫຼັງການການລົງຊຸມຊົນ ເພື່ອປຽບທຽບຄ່າຜົນຄະແນນທົດສອບ ກ່ອນ ແລະ ຫຼັງການລົງຊຸມຊົນ ແລະ ປຽບທຽບຜົນຄະແນນທົດສອບຂອງນັກສຶກສາທີ່ມາຈາກພູມລຳເນົາຕ່າງກັນ ເຊິ່ງສາມາດອະທິບາຍຮູບແບບການວິໄຈໄດ້ດັ່ງນີ້:

| ສອບກ່ອນ | ທົດລອງ | ສອບຫຼັງ |
|---|---|---|
| $O_1$ | X | $O_2$ |

$O_1$ ການທົດສອບພາຍຫຼັງສຳເລັດການຮຽນພາກທິດສະດີ

X ການນຳພານັກສຶກສາລົງຮາກຖານຮຽນຮູ້ກັບຊຸມຊົນ

$O_2$ ການທົດສອບພາຍຫຼັງສຳເລັດການລົງຮາກຖານ

**2.2.5 ການເກັບກຳລວບລວມຂໍ້ມູນ**

ການຄົ້ນຄ້ວາວິໄຈຄັ້ງນີ້ ຜູ້ວິໄຈໄດ້ມີວິທີການດຳເນີນລວບລວມຂໍ້ມູນຕາມຂັ້ນຕອນດັ່ງຕໍ່ໄປນີ້:

- ສຶກສາເອກະສານ ແນວທາງນະໂຍບາຍ ແລະ ແຜນພັດທະນາຊົນນະບົດ ຂອງພັກ-ລັດ ເພື່ອດຳເນີນການສ້າງແບບທົດສອບຄວາມເຂົ້າໃຈຂອງນັກສຶກສາ ແລ້ວນຳສະເໜີຂໍຜູ້ຊົງຄຸນວຸດທິ ພາຍໃນຫຼັກສູດຄູວິທະຍາສາດການເມືອງ ເພື່ອເປັນຊ່ຽວຊານໃນການກວດສອບຄຸນນະພາບຂອງເຄື່ອງມື.
- ນຳເຄື່ອງມືໄປທົດລອງກັບນັກສຶກສາທີ່ບໍ່ແມ່ນກຸ່ມເປົ້າໝາຍການຄົ້ນຄວ້າ ເຊິ່ງນັກສຶກສາກຸ່ມທົດລອງໃນຄັ້ງນີ້ ແມ່ນນັກສຶກສາຄູວິທະຍາສາດການເມືອງ ປີທີ 2 ເຊິ່ງຍັງບໍ່ທັນໄດ້ຮຽນວິຊານີ້ເທື່ອ ເພື່ອຫາຂໍ້ບົກຜ່ອງ ແລະ ປັບປຸງໃຫ້ສົມບູນ
- ນຳເອົາແບບທົດສອບ ເກັບຂໍ້ມູນຕົວຈິງກັບນັກສຶກສາກຸ່ມເປົ້າໝາຍທີ່ກຳລັງຈະລົງຮາກຖານ
- ວາງແຜນປະສານງານກັບອຳນາດການປົກຄອງທ້ອງຖິ່ນ ແຕ່ລະຂັ້ນ ເພື່ອນຳເອົານັກສຶກສາລົງຮາກຖານຮຽນຮູ້ກັບຊຸມຊົນ

- ນຳເອົາແບບທົດສອບຊຸດເດີມ ເກັບຂໍ້ມູນກັບນັກສຶກສາພາຍຫຼັງສຳເລັດການລົງຮາກຖານ ແລະ ກັບຄືນມາເຖິງສະຖາບັນແລ້ວ.

- ກວດສອບຄວາມຖືກຕ້ອງຂອງຂໍ້ມູນທີ່ລວບລວມມາ ແລ້ວດຳເນີນການວິເຄາະທາງສະຖິຕິ

### 2.2.6 ການວິເຄາະຂໍ້ມູນ

ການຄົ້ນຄວ້າຄັ້ງນີ້ ໄດ້ມີການດຳເນີນການວິເຄາະຂໍ້ມູນ ໂດຍໃຊ້ຊອບແວຣ໌ສຳເລັດຮູບ PSPP ມາວິເຄາະສະຖິຕິທາງຄະນິດສາດຄື:

1) ໃຊ້ການວິເຄາະແບບ Paired-Samples T test ເພື່ອປຽບທຽບ ຂອງຄ່າສະເລ່ຍຂອງຄະແນນຜົນການທົດສອບຄວາມເຂົ້າໃຈ ກ່ອນ ແລະ ຫຼັງ ການລົງຮາກຖານຂອງນັກສຶກສາ

2) ໃຊ້ການວິເຄາະແບບ Independent-Samples T test ເພື່ອປຽບທຽບຄະແນນຜົນການທົດສອບຄວາມເຂົ້າໃຈຂອງນັກສຶກສາ ທີ່ມາຈາກພູມລຳເນົາແຕກຕ່າງກັນ

## 3. ຜົນໄດ້ຮັບ

ການຄົ້ນຄວ້າຄັ້ງນີ້ ເປັນການສຶກສາຄວາມເຂົ້າໃຈຂອງນັກສຶກສາຕໍ່ກັບວຽກງານການພັດທະນາຊົນນະບົດພາຍຫຼັງການຈັດການຮຽນຮູ້ແບບລົງຮາກຖານຊຸມຊົນຂອງຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ລະຫວ່າງສົກສຶກສາ 2018 - 2020 ໂດຍການນາເອົານັກສຶກສາລົງຮາກຖານຮຽນຮູ້ພຶດຕິກຳຕົວຈິງຮ່ວມກັບອຳນາດການປົກຄອງ ແລະ ປະຊາຊົນທ້ອງຖິ່ນ ໃນລາຍວິຊາພັດທະນາຊຸມຊົນ ແລະ ຊົນນະບົດ ເຊິ່ງຜົນການຄົ້ນຄວ້າພົບວ່າ:

1) ຜົນຄະແນນທົດສອບຄວາມເຂົ້າໃຈຕໍ່ກັບວຽກງານການພັດທະນາຊົນນະບົດ ຂອງນັກສຶກສາກຸ່ມເປົ້າໝາຍຈຳນວນ 58 ຄົນ ກ່ອນ ແລະ ຫຼັງ ການລົງຮາກຖານພົບວ່າຄະແນນທົດສອບກ່ອນລົງຮາກຖານ ແມ່ນມີຄ່າສະເລ່ຍທີ່ລະດັບ $\bar{X}$ = 6.31 ແລະ ຄ່າຜັນປ່ຽນມາດຖານ S.D = 0.75 ໃນຂະນະທີ່ຜົນຄະແນນທົດສອບຫຼັງການລົງຮາກຖານ ແມ່ນມີຄ່າສະເລ່ຍ $\bar{X}$ = 7.57 ແລະ ຄ່າຜັນປ່ຽນມາດຖານ S.D =0.97 (ຕາຕະລາງ 1) ໂດຍສາມາດແຍກອອກແຕ່ລະດ້ານ ຄືດ້ານຄວາມເຂົ້າໃຈທົດສະດີ ແມ່ນມີຄ່າສະເລ່ຍທີ່ລະດັບ $\bar{X}$ = 6.22 ແລະ ຄ່າຜັນປ່ຽນມາດຖານ S.D = 0.80 ແລະ ດ້ານຄວາມເຂົ້າໃຈພຶດຕິກາຂອງນະໂຍບາຍແມ່ນ ແມ່ນມີຄ່າສະເລ່ຍທີ່ລະດັບ $\bar{X}$ = 6.41 ແລະ ຄ່າຜັນປ່ຽນມາດຖານ S.D = 0.71 ແລະ ຜົນການປຽບທຽບຄ່າສະເລ່ຍຂອງຄະແນນການທົດສອບຄວາມເຂົ້າໃຈຂອງນັກສຶກສາພາຍຫຼັງການລົງຮາກຖານ ແມ່ນສູງກ່ວາກ່ອນລົງຮາກຖານ ດ້ວຍລະດັບຄວາມສຳຄັນທາງສະຖິຕິ .05 ໂດຍມີຄ່າ Sig. = .00 (ຕາຕະລາງ 2)

2) ຜົນຄະແນນທົດສອບຄວາມເຂົ້າໃຈຕໍ່ກັບວຽກງານການພັດທະນາຊົນນະບົດ ພາຍຫຼັງສຳເລັດການລົງຮາກຖານ ຂອງນັກສຶກສາກຸ່ມເປົ້າໝາຍ ທີ່ມາຈາກຕ່າງພູມລຳເນົາພົບວ່າ ນັ້ນ ມີນັກສຶກສາທີ່ມາຈາກຕົວເມືອງ ຈຳນວນ 21 ຄົນ ເຊິ່ງມີຄະແນນທົດສອບຫຼັງສະເລ່ຍ $\bar{X}$ = 7.71 ແລະ ຄ່າຜັນປ່ຽນມາດຖານ S.D = 1.07; ໃນຂະນະທີ່ນັກສຶກສາທີ່ມາຈາກຊົນນະບົດນັ້ນ ແມ່ນມີຈຳນວນ 37 ຄົນ ເຊິ່ງມີຄະແນນທົດສອບຫຼັງສະເລ່ຍ $\bar{X}$ = 7.50 ແລະ ຄ່າຜັນປ່ຽນມາດຖານ S.D = 0.91 (ຕາຕະລາງ 3) ແລະ ຜົນການປຽບທຽບຄະແນນທົດສອບຫຼັງການລົງຮາກຖານ ຂອງນັກສຶກສາກຸ່ມເປົ້າໝາຍທັງ 2 ກຸ່ມ ທີ່ມາຈາກຕົວເມືອງ ແລະ ນັກສຶກສາທີ່ມາຈາກຊົນນະບົດ ແມ່ນມີຄວາມແຕກຕ່າງກັນໜ້ອຍຫຼາຍ ເຊິ່ງບໍ່ມີຄວາມສຳຄັນທາງສະຖິຕິ Sig. > .05 ໂດຍມີຄ່າ Sig. = .264 (ຕາຕະລາງ 4)

## 4. ວິພາກຜົນ

ຈາກຜົນການສຶກສາພົບວ່າ ຈຳນວນນັກສຶກສາທີ່ເປັນກຸ່ມເປົ້າໝາຍທັງ 58 ຄົນນັ້ນ ແມ່ນມີຄະແນນທົດສອບຫຼັງ ສູງກ່ວາຄະແນນທົດສອບກ່ອນ ຢ່າງມີຄວາມສຳຄັນທາງສະຖິຕິ ທັງນີ້ກໍ່ເພາະວ່າ ການຈັດການຮຽນຮູ້ກັບຊຸມຊົນ ໃນວິຊາການພັດທະນາຊຸມຊົນ ແລະ ຊົນນະບົດນີ້ ທາງຜູ້ຄົ້ນຄວ້າ ກໍ່ຄືຜູ້ສອນ ແລະ ນຳພາວິຊານີ້ ໄດ້ມີການກະກຽມຂັ້ນຕອນອັນລະອຽດ ເພື່ອກະຕຸ້ນໃຫ້ນັກສຶກສາເກີດປະສົບການຮຽນຮູ້ດ້ວຍຕົນເອງ ໂດຍຜ່ານກິດຈະກຳທີ່ຕ່າງທີ່ຖືກວາງແຜນໄວ້ໃຫ້ນັກສຶກສາປະຕິບັດຮ່ວມກັນ ແລະ ຮ່ວມກັບຊຸມຊົນ, ທຸກກິດຈະກຳທີ່ຈັດຂຶ້ນລ້ວນແຕ່ມີເປົ້າໝາຍກໍ່ໃຫ້ເກີດປະສົບການກັບນັກສຶກສາໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ອີກດ້ານໜຶ່ງການຈັດການຮຽນຮູ້ແບບນີ້ ຖືໄດ້ວ່າເປັນການເພີ່ມຄວາມເຊື່ອໝັ້ນໃຫ້ແກ່ນັກສຶກສາ, ທັງເປັນການດຶງດູດ, ເພີ່ມບັນຍາກາດອັນດີຕໍ່ກັບການສອນ ແລະ ການຮຽນ ເຊິ່ງສາມາດສັງເກດໄດ້ເຖິງຄວາມແຕກຕ່າງກັນຂອງສະພາບຈິດໃຈຂອງນັກສຶກສາເວລາຮຽນຢູ່ຫ້ອງຮຽນ ແລະ ເວລາລົງຕົວຈິງຮຽນຮູ້ກັບຊຸມຊົນ ທີ່ມີຄວາມກະຕືລືລົ້ນແຕກຕ່າງກັນ ເຮັດໃຫ້ສາມາດຊຶມຊັບບົດຮຽນທີ່ຮຽນໃນຫ້ອງຮຽນ ເຂົ້າກັບພຶດຕິກຳຕົວຈິງທີ່ຕົນເອງໄດ້ຄົ້ນ

ພົບໃນຊຸມຊົນ ແລະ ເກີດປະສົບການຮຽນຮູ້ດ້ວຍຕົນເອງ ຂຶ້ນມາ ເຊິ່ງມັນສອດຄ່ອງກັບແນວຄິດຂອງ ທ່ານ ຊີຣະວັດ ງາມລະມ່ອມ ທີ່ຂຽນວ່າຂະບວນການຮຽນຮູ້ນັ້ນ ເປັນຂະບວນການກໍ່ໃຫ້ເກີດຮູບແບບ ແລະ ພັດທະນາອົງຄວາມຮູ້, ທັກສະ, ທັດສະນະຄະຕິ ແລະ ພຶດຕິກຳ ເຊິ່ງເປັນຜົນມາຈາກ ການສຶກສາ ແລະ ການຝຶກອົບຮົມ, ການຄັດເກົາຂອງສັງຄົມ ແລະ ປະສົບການຂອງຕົນເອງ (ຊີຣະວັດ ງາມລະມ່ອມ, 2016). ຈາກຜົນຄະແນນທົດສອບໃນແຕ່ລະດ້ານເຫັນວ່າ ດ້ານຄວາມເຂົ້າໃຈພຶດຕິກຳຕົວຈິງຂອງນະໂຍບາຍ ຂອງນັກສຶກສາກຸ່ມເປົ້າໝາຍ ແມ່ນຢູ່ໃນລະດັບທີ່ສູງກ່ວາຄວາມເຂົ້າໃຈດ້ານທິດສະດີຂອງນະໂຍບາຍ ອັນເນື່ອງຈາກການໄດ້ລົງສຳພັດກັບສະພາບແວດລ້ອມ ແລະ ການຈັດຕັ້ງປະຕິບັດຕົວຈິງ ຂອງວຽກງານການພັດທະນາຊົນນະບົດຢູ່ຮາກຖານຊຸມຊົນ ໄດ້ເຮັດໃຫ້ເຂົາເຈົ້າເພີ່ມຄວາມເຂົ້າໃຈ ແລະ ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ແລະ ແຜນຍຸດທະສາດການພັດທະນາຊົນນະບົດຂອງລັດຖະບານ; ເຊິ່ງນີ້ເອງເປັນປັດໄຈສຳຄັນທີ່ເຮັດໃຫ້ເຂົາເຈົ້າມີຜົນການຮຽນຫຼັງການທົດສອບ ສູງກ່ວາຄະແນນທົດສອບກ່ອນລົງຮາກຖານຮຽນຮູ້ກັບຊຸມຊົນ ເຊິ່ງເຫັນວ່າໄດ້ມີນັກຄົ້ນຄ້ວາຫຼາຍທ່ານ ທີ່ໄດ້ດຳເນີນການວິໄຈເລື່ອງນີ້ ແລະ ມີຜົນການສຶກສາທີ່ສອດຄ່ອງກັນ ເປັນຕົ້ນແມ່ນ ງານວິໄຈຂອງທ່ານ ສຸພາຣັດ ຄຳເພາະ ໃນປີ 2019 ທີ່ໄດ້ສຶກສາການຈັດການຮຽນຮູ້ເພື່ອເສີມສ້າງພະລັງຊຸມຊົນດ້ວຍຈິດອາສາ ເຊິ່ງຜົນການສຶກສາພົບວ່າ ການຈັດການຮຽນຮູ້ກັບຊຸມຊົນນັ້ນ ເປັນການຈັດການຮຽນໂດຍເນັ້ນຜູ້ຮຽນເປັນສຳຄັນ, ເປັນການບູລະນາການຄວາມຮູ້ຫຼາກຫຼາຍສາຂາວິຊາເຂົ້າກັນ ເຮັດໃຫ້ຜູ້ຮຽນທີ່ເຂົ້າຮ່ວມກິດຈະກຳເກີດການຮຽນຮູ້ດ້ວຍຕົນເອງ ແລະ ເປັນການປູກຈິດສຳນຶກຮັກທ້ອງຖິ່ນນຳອີກ (ສຸພາຣັດ ຄາເພາະ, 2018). ແລະ ນອກຈາກນີ້ກໍ່ຍັງມີງານວິໄຈຂອງທ່ານ ຈິງກັນລະນີ ພັດທະຣະກັງວານ ໃນປີ 2016 ທີ່ມະຫາວິທະຍາໄລສິລິປະກອນ ຂອງຣາຊະອານາຈັກໄທ ທີ່ໄດ້ສຶກສາ ພຶດຕິກຳການວາງແຜນເລື່ອງການຈັດການສິ່ງແວດລ້ອມສຳລັບນັກຮຽນຊັ້ນມັດທະຍົມປີທີ 6 ດ້ວຍການຈັດການຮຽນຮູ້ໂດຍໃຊ້ຊຸມຊົນເປັນຖານ ເຊິ່ງຜົນການສຶກສາພົບວ່າ ຜົນສຳເລັດທາງການຮຽນ ເລື່ອງການຈັດການສິ່ງແວດລ້ອມ ຂອງນັກຮຽນຫຼັງການຮຽນໂດຍໃຊ້ຊຸມຊົນເປັນຖານ ສູງກ່ວາກ່ອນການຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .05 (ຈິງກັນລະນີ ພັດທະຣະກັງວານ, 2018).

ນອກຈາກນີ້ຜົນການສຶກສາຍັງພົບວ່າ ນັກສຶກສາກຸ່ມເປົ້າໝາຍທີ່ມາຈາກຕ່າງພູມລຳເນົາ ແມ່ນມີຜົນຄະແນນການທົດສອບ ຫຼັງການລົງຮາກຖານຊຸມຊົນບໍ່ແຕກຕ່າງກັນ ເຊິ່ງເປັນການຄົ້ນພົບທີ່ຂ້ອນຂ້າງປະຫຼາດໃຈສຳລັບພວກເຮົາ ໂດຍທີ່ບໍ່ເປັນໄປຕາມສົມມຸດຖານທີ່ກຳນົດໄວ້ວ່າ ນັກສຶກສາທີ່ມາຈາກພູມລຳເນົາຕ່າງກັນ ຈະມີຜົນການທົດສອບທີ່ແຕກຕ່າງກັນ, ສາເຫດທີ່ພວກເຮົາມີສົມມຸດຖານເຊັ່ນນີ້ ກໍ່ເພາະວ່າການນັກສຶກສາກຸ່ມເປົ້າໝາຍຂອງພວກເຮົາ ແມ່ນມີທັງຜູ້ທີ່ມາຈາກຕົວເມືອງ ແລະ ມາຈາກຊົນນະບົດ ໂດຍການລົງຮາກຖານຊຸມຊົນຂອງພວກເຮົານັ້ນແມ່ນໄດ້ເລັ່ງເປົ້າໝາຍໃສ່ເຂດຫ່າງໄກສອກຫຼີກ ທີ່ມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ ແລະ ພື້ນຖານໂຄງລ່າງ, ໃນຂະນະທີ່ເນື້ອໃນຂອງແບບທົດສອບຂອງພວກເຮົາ ກໍ່ເນັ້ນປະເມີນພັດທະນາການທັກສະດ້ານສັງຄົມ ທີ່ເກີດຂຶ້ນກັບນັກສຶກສາລະຫວ່າງການເຮັດກິດຈະກຳກັບປະຊາຊົນທ້ອງຖິ່ນ, ແຕ່ເຖິງຢ່າງໃດກໍ່ຕາມ ເມື່ອວິເຄາະລະອຽດເຖິງເນື້ອໃນຫຼັກສູດຂອງວິຊາການພັດທະນາຊຸມຊົນ ແລະ ຊົນນະບົດນີ້ແລ້ວເຫັນວ່າເນື້ອໃນບົດຮຽນສ່ວນໃຫຍ່ແມ່ນກ່ຽວຂ້ອງກັບບັນດາແນວທາງນະໂຍບາຍຂອງພັກ-ລັດ ຕໍ່ກັບການພັດທະນາເສດຖະກິດ ເວົ້າລວມເວົ້າສະເພາະກໍ່ຄືແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ທີ່ຢູ່ເຂດຫ່າງໄກສອກຫຼີກ ເຊິ່ງເປັນທິດສະດີເອກະສານທີ່ນັກສຶກສາຄູວິທະຍາສາດການເມືອງມີຄວາມຄຸ້ນເຄີຍ ແລະ ຄົ້ນຄ້ວາຢ່າງເປັນປະຈຳຢູ່ແລ້ວ ເຊິ່ງອາດເປັນສາເຫດໜຶ່ງຂອງການມີຜົນການຮຽນບໍ່ແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິ ຂອງກຸ່ມນັກສຶກສາຈາກຕົວເມືອງ ແລະ ນັກສຶກສາຈາກຊົນນະບົດ ທີ່ຮ່ວມຮຽນຫ້ອງດຽວກັນ.

## 5. ສະຫຼຸບ

ຜົນການສຶກສາເຂົ້າໃຈຂອງນັກສຶກສາຕໍ່ກັບວຽກງານການພັດທະນາຊົນນະບົດ ພາຍຫຼັງການຈັດການຮຽນຮູ້ແບບລົງຮາກຖານຊຸມຊົນຂອງຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ລະຫວ່າງສົກສຶກສາ 2018 - 2020 ພົບວ່າ:

1) ຜົນຄະແນນທົດສອບຄວາມເຂົ້າໃຈຕໍ່ກັບວຽກງານການພັດທະນາຊົນນະບົດ ຂອງນັກສຶກສາກຸ່ມເປົ້າໝາຍ

ຈຳນວນ 58 ຄົນ ກ່ອນ ແລະ ຫຼັງ ການລົງຮາກຖານພົບວ່າ ຄະແນນການທົດສອບຄວາມເຂົ້າໃຈຂອງນັກສຶກສາພາຍຫຼັງ ການລົງຮາກຖານ ແມ່ນສູງກ່ວາກ່ອນລົງຮາກຖານ ດ້ວຍ ລະດັບຄວາມສຳຄັນທາງສະຖິຕິ .05 ໂດຍມີຄ່າ Sig. = .00 ໂດຍເມື່ອພິຈາລະນາເປັນດ້ານແລ້ວເຫັນວ່າ ນັກສຶກສາ ກຸ່ມເປົ້າໝາຍແມ່ນມີຄວາມເຂົ້າດ້ານພຶດຕິກຳຂອງນະໂຍບາຍ ຫຼາຍກ່ວາດ້ານທິດສະດີຂອງນະໂຍບາຍ.

2) ຜົນຄະແນນທົດສອບຄວາມເຂົ້າໃຈຕໍ່ກັບວຽກງານການພັດທະນາຊົນນະບົດ ພາຍຫຼັງສຳເລັດການລົງຮາກຖານ ຂອງນັກສຶກສາກຸ່ມເປົ້າໝາຍທີ່ມາຈາກຕົວເມືອງ ຈຳນວນ 21 ຄົນ ແລະ ກຸ່ມເປົ້າໝາຍທີ່ມາຈາກຊົນນະບົດນັ້ນຈຳນວນ 37 ຄົນ ພົບວ່າ ຄວາມເຂົ້າໃຈຂອງເຂົາເຈົ້າຕໍ່ກັບວຽກງານການພັດທະນາຊົນນະບົດ ແມ່ນມີຄວາມແຕກຕ່າງກັນໜ້ອຍຫຼາຍ ເຊິ່ງບໍ່ມີຄວາມສຳຄັນທາງສະຖິຕິ Sig. > .05 ໂດຍມີຄ່າ Sig. = .264

## 6. ຂໍ້ຂັດແຍ່ງ

ພວກເຮົາ ທີມງານນັກຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດໃດໆທັງນັ້ນ, ກໍລະນີມີການລະເມີດໃນຮູບການໃດກໍ່ຕາມພວກເຮົາມີຄວາມຍິນດີ ຂໍຮັບຜິດຊອບແຕ່ພຽງຝ່າຍດຽວ

## 7. ເອກະສານອ້າງອີງ


ຄະນະສຶກສາສາດ. (2018). ວິທີສອນວິທະຍາສາດການເມືອງ. ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ຄະນະໂຄສະນາອົບຮົມສູນກາງພັກ. (2016). ມະຕິກອງປະຊຸມໃຫຍ່ຄັ້ງທີ່ X ຂອງພັກ. ນະຄອນຫຼວງວຽງຈັນ: ຄະນະໂຄສະນາອົບຮົມສູນກາງພັກ.

ຈິງກັນລະນີ ພັດທະຣະກັງວານ. (2018). ພຶດຕິກຳການວາງແຜນເລື່ອງການຈັດການສິ່ງແວດລ້ອມສຳລັບນັກຮຽນຊັ້ນມັດທະຍົມປີທີ 6 ດ້ວຍການຈັດການຮຽນຮູ້ໂດຍໃຊ້ຊຸມຊົນເປັນຖານ. ບາງກອກ: ມະຫາວິທະຍາໄລສິລະປະກອນ.

ສຸພາຣັດ ຄຳເພາະ. (2018, ກັນຍາ-ທັນວາ). ການຈັດການຮຽນຮູ້ເພື່ອເສີມສ້າງພະລັງຊຸມຊົນດ້ວຍຈິດອາສາ. ໄວຍະວະລົງກອນປະຣິທັດ (ມະນຸດສາດ ແລະ ສັງຄົມສາດ), 8(3), 71-72.

ສູນພັດທະນາຄູ ແລະ ກົມສ້າງຄູ. (2019). ຫຼັກສູດສ້າງຄູມັດທະຍົມ ລະດັບປະລິນຍາຕີ. ນະຄອນຫຼວງວຽງຈັນ: ກະຊວງສຶກສາສາທິການ ແລະ ກິລາ.

ຊິຣະວັດ ງາມລະມ່ອມ. (2016). ແນວຄິດການຈັດການຮຽນຮູ້ໃນຊຸມຊົນ. ບາງກອກ: TDRM Insitution.


ຕາຕະລາງ 1: ຜົນການຄະແນນຜົນການທົດສອບ ກ່ອນ ແລະ ຫຼັງການລົງຮາກຖານຊຸມຊົນ

**Paired Samples Statistics**

| | | Mean | N | Std. Deviation | Std. Error Mean |
|---|---|---|---|---|---|
| Pair 1 | Pretest | 6.3103 | 58 | .75989 | .09978 |
| | posttest | 7.5776 | 58 | .97243 | .12769 |

ຕາຕະລາງ 2: ປຽບທຽບຄ່າສະເລ່ຍຂອງຄະແນນທົດສອບ ກ່ອນ ແລະ ຫຼັງ ການລົງຮາກຖານຊຸມຊົນ

**Paired Samples Test**

| | | Paired Differences | | | | | t | df | Sig. (2-tailed) |
|---|---|---|---|---|---|---|---|---|---|
| | | Mean | Std. Deviation | Std. Error Mean | 95% Confidence Interval of the Difference | | | | |
| | | | | | Lower | Upper | | | |
| Pair 1 | Pretest - posttest | -1.26724 | 1.15931 | .15222 | -1.57207 | -.96242 | -8.325 | 57 | .000 |

ຕາຕະລາງ 3: ຜົນຄະແນນສະເລ່ຍຂອງນັກສຶກສາ ຕາມພູມລຳເນົາ

| Group Statistics | | | | | |
|---|---|---|---|---|---|
| | Original | N | Mean | Std. Deviation | Std. Error Mean |
| posttest | Town | 21 | 7.7143 | 1.07902 | .23546 |
| | Rural | 37 | 7.5000 | .91287 | .15008 |

ຕາຕະລາງ 4: ຜົນການປຽບທຽບຄ່າສະເລ່ຍ ຄະແນນທົດສອບຫຼັງການລົງຮາກຖານຊຸມຊົນຂອງນັກສຶກສາ ຕາມພູມລຳເນົາເດີມ

| Independent Samples Test | | | | | | | | | | |
|---|---|---|---|---|---|---|---|---|---|---|
| | | Levene's Test for Equality of Variances | | t-test for Equality of Means | | | | | | |
| | | F | Sig. | t | df | Sig. (2-tailed) | Mean Difference | Std. Error Difference | 95% Confidence Interval of the Difference | |
| | | | | | | | | | Lower | Upper |
| posttest | Equal variances assumed | 1.275 | .264 | .804 | 56 | .425 | .21429 | .26651 | -.31960 | .74817 |
| | Equal variances not assumed | | | .767 | 36.228 | .448 | .21429 | .27922 | -.35188 | .78045 |